ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານໜອງຄ້ຽນຄຸ ,ເມືອງນາຊາຍທອງ
ແຂວງນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ 030-988-2809

ເລກທີ: 003 /ລອທ

ນະຄອນຫຼວງວຽງຈັນ,ເລກທີ: 15 JAN 2025

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ ທີ່ນັບຖື.
ທ່ານ ຜູ້ອຳນວຍການໃຫ່ຍຕະຫຼາດຫຼັກຊັບລາວ ທີ່ນັບຖື.
ທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື.

ເລື່ອງ : ລາຍງານ ຄວາມຄືບໜ້າການຈັດຕັ້ງປະຕິບັດແຜນປັບປຸງແກ້ໄຂການຂາດທຶນຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ(ລອທ) ປະຈຳໄຕມາດ4 ປີ 2024.

- ອີງຕາມ ລະບຽບວ່າດວ້ຍການຈົດທະບຽນຮຸ້ນ(ສະບັບປັບປຸງ) ເລກທີ 007/23 ຕລຊລ, ລົງວັນທີ 12 ກັນຍາ 2023 ມາດຕາ 26.
- ອີງຕາມ ໜັງສື ແຈ້ງການກ່ຽວກັບການຮັກສາສະຖານະການເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ 1310/ຕລຊລ, ລົງວັນທີ 09 ຕຸລາ 2024
- ອີງຕາມ ບົດລາຍງານ ຄວາມຄືບໜ້າການຂາດທຶນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ(ລອທ) ປະຈຳປີ 2024 ສະບັບເລກທີ 089/ລອທ,ລົງວັນທີ 09 ກໍລະກົດ 2024
- ອີງຕາມ ບົດລາຍງານ ຄວາມຄືບໜ້າການຂາດທຶນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ(ລອທ) ໄຕມາດ3 ປະຈຳປີ 2024 ສະບັບເລກທີ 127/ລອທ,ລົງວັນທີ 14 ຕຸລາ 2024

ບໍລິສັດ ລາວອາໂກຣເທັກ ມະຫາຊົນ(ລອທ) ຂໍຖືເປັນກຽດລາຍງານມາຍັງທ່ານເພື່ອຊາບ ກ່ຽວກັບ ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດແຜນປັບປຸງແກ້ໄຂການຂາດທຶນຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ(ລອທ) ສະບັບເລກທີ 127/ ລອທ,ລົງວັນທີ 09 ກໍລະກົດ 2024. ປະຈຳໄຕມາດ4 ປີ 2024 ທີ່ຜ່ານມາ. ຜ່ານການດຳເນີນທຸລະກິດ ເຫັນວ່າ ບໍລິສັດ ມີລາຍຮັບ ເພີ່ມຂຶ້ນ ຈາກການຂາຍສິນຄ້າ ແລະ ການບໍລິການຜະລິດຕະພັນ. ເພີ່ມຂຶ້ນໃນອັດຕາສ່ວນ 27,56% ເມື່ອທຽບໃສ່ກັບໄຕມາດທີ່ຜ່ານມາ ເຊິ່ງເປັນມູນຄ່າທັງໝົດ 12,150.71 ລ້ານກີບ ການເພີ່ມຂຶ້ນດັ່ງກ່າວໄດ້ມາຈາກການຂາຍສິນຄ້າ ດັ່ງນີ້:

ລາຍການສິນຄ້າ	ລາຍໄດ້(ລ້ານກີບ)	ເພີ່ມຂຶ້ນ/ຫຼຸດລົງ(ລ້ານກີບ)	ເພີ່ມຂຶ້ນ/ຫຼຸດລົງ(%)
ນ້ຳມັນປາມດິບCPO	8,941.81	311.05	3,27%
ຕົ້ນກ້າປາມ	0.60	(130)	(1,36%)
ກາກປາມ	1,894.01	1,552.24	16,30%
ປຸ໋ຍ	-	(185.80)	(1,95%)
ລາຍໄດ້ອື່ນໆ	1,314.29	1,077.52	11,31%
ລວມ	12,150.71	2,625.11	27,56%

❖ ບໍລິສັດຈະສືບຕໍ່ແຜນການດຳເນີນທຸລະກິດ

- ແຜນການຂາຍນ້ຳມັນປາມດິບ ບໍລິສັດຄາດຄະເນການຂາຍໂດຍອີງໃສ່ການຜະລິດຂອງບໍລິສັດ. ບວກກັບຄວາມ ຕ້ອງການຂອງຜູ້ບໍລິໂພກ.

- ແຜນການຂາຍປາມ: ບໍລິສັດຄາດຄະເນການຂາຍໂດຍອີງໃສ່ຄວາມຕ້ອງການຊື້ຂອງຜູ້ບໍລິໂພກໃນປະຈຸບັນ.
- ແຜນການຂາຍປຸ່ຍ: ບໍລິສັດຈະໄດ້ສິ່ງເສີມຊາວກະສິກອນ(ລູກສອນບໍລິສັດ ແລະ ສອນນອກບໍລິສັດ) ເພື່ອໃສ່ປຸ່ຍ ປາມຕື່ມ.
- ຍິ່ງໄປກວ່ານັ້ນ, ບໍລິສັດໄດ້ຄົ້ນຄ້ວາເຕັກໂນໂລຊີໃຫມ່ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍໃນການຜະລິດຕໍ່ໄປ

ດັ່ງນັ້ນ, ຈຶ່ງເຮັດບົດລາຍງານ ສະບັບນີ້ຍັງທ່ານເພື່ອຊາບ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ເສດ ພັດທະນະນາດ

Zait PATTANAMAS